01, ຖະໜົນ ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ, ໂທ: +85621 213200, ລະຫັດ SWIFT: COEBLALA

## ຂໍ້ມູນກ່ຽວກັບຮຸ້ນ:

ລາຄາກໍານົດ: 5.000 ກີບ/ຮຸ້ນ
ຈໍານວນຮຸ້ນທັງໝົດ: 207.723.300
ລາຄາຮຸ້ນອອກຈໍາໜ່າຍໃຫ້ມວນຊົນຄັ້ງທໍາອິດ: 5.000 ກີບ/ຮຸ້ນ
ລາຄາຮຸ້ນ ຮອດວັນທີ 01/04/2024 ລາຄາປິດ: 4.500 ກີບ/ຮຸ້ນ
ມູນຄ່າຕະຫລາດຂອງບໍລິສັດ: 934.754,85 ລ້ານກີບ
%ຂອງຮຸ້ນທີ່ສາມາດຊື້-ຂາຍໃນຕະຫລາດ: 30%

**ຜູ້ຖືຮຸ້ນລາຍໃຫຍ່:**

- ກະຊວງການເງິນ 60%
- ທະນາຄານ COFIBRED, ຄູ່ຮ່ວມຍຸດທະສາດ 10%
- 30% ໃນຕະຫລາດຫຼັກຊັບ.

**ພະນັກງານ**
2.075 ຄົນ
ຍິງ 965 ຄົນ

**ເຄືອຂ່າຍບໍລິການ**
20 ສາຂາ
99 ໜ່ວຍບໍລິການ
12 ຫ້ອງແລກປ່ຽນ

**ພະແນກ ແລະ ສູນ**
11 ພະແນກ
3 ສູນ

## ທະນາຄານ ແລະ ບໍລິສັດໃນເຄືອ (% ຮຸ້ນທີ່ຖືຄອງ)

| bfl | LCNB | BCEL-KT | LVI | LAPNet | |
|---|---|---|---|---|---|
| 25% | 30% | 39,87% | 70% | 35% | 20% |

**ບັນຊີເງິນຝາກ**
2.700.000 +

**ຈໍານວນຜູ້ໃຊ້ BCEL One**
1.500.000 +

**ຕົວເລກຜະລິດຕະພັນ**

- 140.000+ ຮ້ານ Onepay
- 453 ຕູ້ ATM
- 29 ຕູ້ຝາກເງິນ CDM
- 41 ຕູ້ CRM
- 1681 ຕົວແທນ Bcome
- 479 ຕົວແທນ MoneyGram
- 50.000+ ຜູ້ໃຊ້ i-Bank

## ຕົວເລກການເງິນທີ່ສໍາຄັນຂອງ ທຄຕລ

| | |
|---|---|
| ອັດຕາສ່ວນສະພາບຄ່ອງ (Liquidity) | 30,35% |
| ອັດຕາສ່ວນກໍາໄລສຸດທິຕໍ່ທຶນທັງໝົດ (ROE): | 8,98% |
| ອັດຕາສ່ວນກໍາໄລສຸດທິຕໍ່ຊັບສິນທັງໝົດ (ROA): | 0,18% |
| ອັດຕາສ່ວນໜີ້ສິນຕໍ່ທຶນທັງໝົດ (D/E): | 4.804,97% |
| ອັດຕາສ່ວນກໍາໄລສຸດທິຕໍ່ລາຍຮັບທັງໝົດ (Net Profit Margin): | 3,98% |
| ອັດຕາສ່ວນ NIM (Net Interest Margin): | 1,83% |
| ອັດຕາຄວາມພຽງພໍຂອງທຶນ(Capital Adequacy Ratio) | 4,91% |
| ອັດຕາສ່ວນເງິນກູ້/ເງິນຝາກ | 44,38% |
| ລາຍຮັບດອກເບ້ຍສຸດທິ/ຊັບສິນທັງໝົດ | 1,37% |
| ລາຍຈ່າຍດອກເບ້ຍ/ໜີ້ສິນທີ່ມີດອກເບ້ຍ | 2,34% |
| ລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການ/ລາຍຮັບທັງໝົດຈາກການດໍາເນີນງານ | 29,57% |
| ລາຍຈ່າຍຈາກການດໍາເນີນງານ/ລາຍຮັບທັງໝົດຈາກການດໍາເນີນງານ | 25,47% |
| ອັດຕາຜົນຕອບແທນຕໍ່ຮຸ້ນ EPS (ກີບ) | 1.114 |



## ປະຫວັດຂອງທະນາຄານ

ທຄຕລ ເປັນທະນາຄານທຸລະກິດແຖວໜ້າໃນລາວ ທີ່ມີຜະລິດຕະພັນ ແລະການບໍລິການດ້ານການທະນາຄານທີ່ຫຼາກຫຼາຍ. ທະນາຄານໄດ້ມີສ່ວນຄອງຕະຫຼາດໃນລະດັບສູງ. ທະນາຄານໄດ້ຮັບການສ້າງຕັ້ງຂຶ້ນຄັ້ງທໍາອິດໃນປີ 1975 ເຊິ່ງເປັນສາຂາຂອງທະນາຄານແຫ່ງລັດຂອງ ສປປ ລາວ ເພື່ອປະຕິບັດທຸລະກໍາທະນາຄານ ແລະ ການບໍລິການທະນາຄານລະຫວ່າງປະເທດໃຫ້ແກ່ລັດຖະບານ. ຈາກນັ້ນ, ໃນປີ 1989, BCEL ໄດ້ຫັນເປັນທະນາຄານທຸລະກິດຢ່າງເປັນທາງການ ແລະ ໄດ້ເລີ່ມດໍາເນີນທຸລະກິດຢ່າງເຕັມຕົວ. ໃນປີ 2011, ທຄຕລ ໄດ້ຫັນເປັນບໍລິສັດມະຫາຊົນ ແລະ ກາຍເປັນທະນາຄານຈົດທະບຽນແຫ່ງທໍາອິດໃນຕະຫຼາດຫຼັກຊັບລາວ (ຕລຊ).

## ເງິນປັນຜົນຕໍ່ຮຸ້ນ (ຫົວໜ່ວຍກີບ)




## ຕົວເລກຖານະການເງິນ

- ຫົວໜ່ວຍ: ລ້ານກີບ

| | 2023 | 2022 | % ການປ່ຽນແປງ |
|---|---|---|---|
| ລວມຊັບສິນ | 126.433.759 | 94.493.015 | 33,80% |
| ລວມໜີ້ສິນ | 123.856.095 | 92.135.055 | 34,43% |
| ລວມທຶນ | 2.577.664 | 2.357.960 | 9,32% |
| ລວມໜີ້ສິນ ແລະ ທຶນ | 126.433.759 | 94.493.015 | 33,80% |
| ລາຍຮັບສຸດທິຈາກດອກເບ້ຍ | 1.738.189 | 1.270.883 | 36,77% |
| ລາຍຮັບສຸດທິຈາກຄ່າທໍານຽມ ແລະ ບໍລິການ | 553.206 | 364.145 | 51,92% |
| ລາຍຮັບຈາກການດໍາເນີນງານ | 3.128.278 | 1.718.134 | 82,07% |
| ລາຍຮັບສຸດທິຈາກການດໍາເນີນງານ | 1.027.422 | 805.414 | 27,56% |
| ລວມລາຍຈ່າຍໃນການດໍາເນີນງານ | -796.695 | -645.233 | 23,47% |
| ກໍາໄລກ່ອນອາກອນ | 283.120 | 197.079 | 43,66% |
| ກໍາໄລສຸດທິ ໃນປີ | 231.408 | 228.190 | 1,41% |
| ກໍາໄລຕໍ່ຮຸ້ນ (ກີບ) | 1.114 | 1.099 | 1,36% |

## ຜະລິດຕະພັນ:

**ເງິນຝາກ, ເງິນກູ້, ຜະລິດຕະພັນບັດພາຍໃນ, ຜະລິດບັດສາກົນເຊັ່ນ:** UnionPay, VISA, JCB, Mastercard.
**ຜະລິດຕະພັນອີເລັກໂທນິກ:** BCEL One, BCEL i-bank, OnePay, SMS Banking, E-commerce, ATM, POS;
**ບໍລິການຕ່າງປະເທດ:** ໂອນເງິນດ້ວຍລະບົບ Swift, Moneygram, SPEED-SEND , ບໍລິການ LC, LG ແລະ ບໍລິການ ອື່ນໆເຊັ່ນ: ໂອນບັນຊີຮຸ້ນ, ບໍລິການດ້ວຍລົດເຄື່ອນທີ່ ແລະ ຊໍາລະຄ່າໃບບິນຕ່າງໆ.



# ສະມາຊິກສະພາບໍລິຫານ ທຄຕລ

## BCEL BOARD OF DIRECTORS

1


**ທ່ານ ບຸນປອນ ວັນນະຈິດ**
ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ

**Mr. Bounpone VANNACHITH**
Deputy Minister of Finance, Chairman

2


**ທ່ານ ຄໍາສຸກ ສຸນດາລາ**
ຮອງປະທານສະພາບໍລິຫານ

**Mr. Khamsouk SUNDARA**
Independent Member, as Vice Chairman

3


**ທ່ານ ນ. ສາຍສະໝອນ ຈັນທະຈັກ**
ຜູ້ອໍານວຍການ ທຄຕລ, ເປັນກໍາມະການ

**Mrs. Saysamone CHANTHACHACK**
Managing Director BCEL, as Member

4


**ທ່ານ ປະສົມເພັດ ຄໍາຕັນ**
ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ-ປະກັນໄພ ກະຊວງການເງິນ, ເປັນກໍາມະການ

**Mr. Pasomphet KHAMTANH**
Deputy Director General, department of State-Owned Enterprises Management and Insurance, Ministry of Finance, as Member

5


**ທ່ານ ສະຕີເຟັນ ມັງເຈຍວາກາ**
ຕາງໜ້າ ໂກຟີ ບເຣດ, ເປັນກໍາມະການ

**Mr. Stephane MANGIAVACCA**
COFIBRED Representative, as Member

6


**ທ່ານ ຣສ. ທອງເພັດ ຈັນທະນີວົງ**
ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ເປັນກໍາມະການອິດສະຫຼະ

**Assoc.Prof. Thongpheth CHANTHANIVONG**
Vice Dean of Faculty of Economics and Business Management, National University of Laos, as Independent Member

7


**ທ່ານ ນ. ລັດດາວັນ ຊົງວິໄລ**
ຮັກສາການຫົວໜ້າສູນຄົ້ນຄວ້າເສດຖະກິດມະຫາພາກ ສະຖາບັນວິທະຍາສາດ ເສດຖະກິດ ແລະ ສັງຄົມແຫ່ງຊາດ, ເປັນກໍາມະການອິດສະຫຼະ

**Mrs. Latdavanh SONGVILAY**
Acting Director General of the Center for Macroeconomic Policy and Economic Restructuring (CMER), as Independent Member

8


**ທ່ານ ສອນໄຊ ສີລາເພັດ**
ຮອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ,ເປັນກໍາມະການອິດສະຫຼະ

**Mr. Sonexay SILAPHET**
President of Lao Chamber of Professional Accountants and Auditors, as Independent Member

9


**ທ່ານ ວຽງສຸກ ຈຸນທະວົງ**
ຮອງຜູ້ອໍານວຍການ ທຄຕລ, ເປັນກໍາມະການ

**Mr. Viengsouk CHOUNTHAVONG**
Deputy Managing Director BCEL, as Member




# ຄະນະຜູ້ບໍລິຫານ ທຄຕລ

## BCEL Directors

1

**ທ່ານ ນ. ສາຍສະໝອນ ຈັນທະຈັກ**
**ຜູ້ອໍານວຍການ ທຄຕລ**

Mrs. Saysamone CHANTHACHACK
Managing Director BCEL public



2

**ທ່ານ ນັນທະລາດ ແກ້ວປະເສີດ**
**ຮອງຜູ້ອໍານວຍການ ທຄຕລ**

Mr. Nanthalath KEOPASEUTH
Deputy Managing Director BCEL public



3

**ທ່ານ ກົງສັກ ສຸພອນສີ**
**ຮອງຜູ້ອໍານວຍການ ທຄຕລ**

Mr. Kongsack SOUPHONESY
Deputy Managing Director BCEL public



4

**ທ່ານ ວຽງສຸກ ຈຸນທະວົງ**
**ຮອງຜູ້ອໍານວຍການ ທຄຕລ**

Mr. Viengsouk CHOUNTHAVONG
Deputy Managing Director BCEL public



5

**ທ່ານ ນ. ບົວໄພວັນ ນັນດາວົງ**
**ຮອງຜູ້ອໍານວຍການ ທຄຕລ**

Mrs. Bouaphayvanh NANDAVONG
Deputy Managing Director BCEL public



6

**ທ່ານ ສາຍຈິດ ສິມມະວົງ**
**ຮອງຜູ້ອໍານວຍການ ທຄຕລ**

Mr. Saychit SIMMAVONG
Deputy Managing Director BCEL public



**ໝາຍເຫດ: ຂໍ້ມູນລ່າສຸດປີ 2023**

## ລາງວັນ ແລະ ການຍ້ອງຍໍ

ໂດຍອີງໃສ່ຜົນສໍາເລັດຂອງການດໍາເນີນທຸລະກິດ ແລະ ການປະກອບສ່ວນຂອງ ທຄຕລ ໃນຊຸມປີຜ່ານມາ, ໃນປີ 2023 ທຄຕລ ໄດ້ຮັບລາງວັນ ແລະ ຜົນສໍາເລັດດັ່ງນີ້:

- **ໄດ້ຮັບລາງວັນນັກທຸລະກິດ ຊັ້ນນໍາດີເດັ່ນ ສຄອຊ ປະຈໍາປີ 2022 (Lao Business Leader Award 2022)**
- **ໄດ້ຮັບ 4 ລາງວັນດ້ານການດໍາເນີນທຸລະກິດດີເດັ່ນ (VISA Client forum 2023)**
  - ລາງວັນດີເດັ່ນ ຜູ້ນໍາດ້ານການຊໍາລະຂ້າມແດນ
  - ວັນດີເດັ່ນ ຜູ້ນໍາດ້ານການຊໍາລະຂອງຮ້ານຄ້າ
  - ລາງວັນດີເດັ່ນ ໃນການອະນຸມັດລາຍການບັດທີ່ດີທີ່ສຸດ
  - ລາງວັນດີເດັ່ນ ຜູ້ນໍາດ້ານການຊໍາລະສະສາງ

## ແຜນຍຸດທະສາດ 2021 - 2025

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ:** ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດໍາເນີນທຸລະກິດໃຫ້ຍືນຍົງ; ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ; ການພັດທະນາບໍລິຫານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ; ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ; ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualifies Bank (QAB). (ປະກອບມີ 5 ແຜນງານ, 25 ໂຄງການ ແລະ 149 ແຜນວຽກ).
- **ຍຸດທະສາດທີ 2: ຍຸດທະສາດຫັນເປັນທັນສະໄໝ ໂດຍນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ໆ ໃນການດໍາເນີນທຸລະກິດກ້າວສູ່ຍຸກເສດຖະກິດດີຈິຕອລ:** ການພັດທະນາ ແລະ ການຄຸ້ມຄອງລະບົບໄອທີ; ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິໃຫ້ທັນສະໄໝໄດ້ມາດຕະຖານສາກົນ ແລະ ມີຄຸນະພາບ; ພັດທະນາຜະລິດຕະພັນເພື່ອຫັນສູ່ການບໍລິການໃນຮູບແບບ Digital Banking. (ປະກອບມີ 3 ແຜນງານ, 12 ໂຄງການ ແລະ 107 ແຜນວຽກ)
- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ:** ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ; ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ; ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard) (ປະກອບມີ 3 ແຜນງານ, 5 ໂຄງການ ແລະ 12 ແຜນວຽກ)